ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 553/ທຫ

ນະຄອນຫຼວງວຽງຈັນ, ວັນທີ: 17 DEC 2012

# ແຈ້ງການ

**ເຖິງ**: ຫົວໜ້າຫ້ອງການບັນດາ ກະຊວງ ແລະ ອົງການທຽບເທົ່າ, ບັນດາທະນາຄານທຸລະກິດລັດ, ເອກະຊົນ, ສາຂາຕ່າງປະເທດ ແລະ ສຳນັກງານຜູ້ຕາງໜ້າ.

**ເລື່ອງ**: ການນຳໃຊ້ແຊັກ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ ປີ 1995 ແລະ ກົດໝາຍສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ ປີ 1999;
- ອີງຕາມດຳລັດເລກທີ 175/ນຍ, ລົງວັນທີ 22 ຕຸລາ ປີ 1996 ດຳລັດວ່າດ້ວຍແຊັກ;
- ອີງຕາມປື້ມຄູ່ມືການນຳໃຊ້ແຊັກ ລົງວັນທີ 01/03/1997.

ຫ້ອງການທະນາຄານແຫ່ງ ສ ປ ປ ລາວ ຂໍແຈ້ງມາຍັງທ່ານບັນດາຂ້າງເທິງເລື່ອງ ການນຳໃຊ້ແຊັກ ທີ່ຜ່ານລະບົບທະນາຄານ ໃນໄລຍະທີ່ຜ່ານມາເຫັນວ່າບາງພາກສ່ວນມີການປ່ຽນແປງດັດແກ້ເນື້ອໃນ, ຂີດຂ້າ, ລຶບຈຳນວນເງິນທີ່ເປັນຕົວເລກ ແລະ ຈຳນວນເງິນເປັນຕົວໜັງສື, ການນຳໃຊ້ກາປະທັບ ( ກາປະທັບດັດແກ້ ແລະ ລາຍເຊັນ ກຳກັບ )ເມື່ອມີການດັດແກ້ກໍ່ບໍ່ຊັດເຈນນັ້ນ,ເຊິ່ງການດັດແກ້ແຕ່ລະຄັ້ງເຮັດໃຫ້ແຊັກເປິເປື້ອນ, ຜູ້ທີ່ຈະນຳໃຊ້ແຊັກ ໃນການໂອນ ແລະ ເບີກຈ່າຍຢູ່ນຳທະນາຄານແຫ່ງ ສປປ ລາວ ຄວນເອົາໃຈໃສ່ດັ່ງນີ້:

- ການລົງວັນທີ ເດືອນ ປີ ຕ້ອງລະມັດລະວັງ, ຕ້ອງມີວິທີການບໍ່ໃຫ້ເພີ່ມຕື່ມໃສ່ເຊັ່ນ ຕົວຢ່າງ: ວັນທີ 5.1.12 ຕ້ອງຂຽນເປັນ <u>0</u>5.<u>0</u>1.<u>20</u>12 ຫຼື ຂຽນເດືອນເປັນຕົວໜັງສື.
- ຜູ້ສັ່ງຈ່າຍ ແລະ ຜູ້ຮັບແຊັກ ກໍ່ຕ້ອງກວດກາຄວາມຖືກຕ້ອງຂອງແຊັກ, ຂຽນແຊັກຕາມເງື່ອນໄຂໂດຍມີເນື້ອໃນຄົບຖ້ວນໃນການສັ່ງຈ່າຍແຊັກ, ລາຍເຊັນຜູ້ສັ່ງຈ່າຍແຊັກ, ກາປະທັບ, ຄວາມສົມບູນຂອງໜ້າແຊັກຂຽນຊັດເຈນ, ບໍ່ເປື້ອນ.

ຖ້າຫາກບໍ່ປະຕິບັດຕາມແຈ້ງການຂອງຫ້ອງການ ທະນາຄານແຫ່ງ ສ ປ ປ ລາວ ຈະບໍ່ຮັບພິຈາລະນາໃນ ການໂອນ ແລະ ເບີກຈ່າຍແຊັກດັ່ງກ່າວ.

ດັ່ງນັ້ນ, ຈິ່ງເຮັດແຈ້ງການໃຫ້ທ່ານຮັບຊາບເພື່ອຈັດຕັ້ງ ແລະ ປະຕິບັດ.

ຣ ຫົວໜ້າຫ້ອງການທະນາຄານແຫ່ງ ສ ປ ປ ລາວ

ນິ່ງແກ້ວ ສຸວັດດີ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS

ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la